

ນະໂຍບາຍ ແລະ ລະບຽບການຫຼຸດຜ່ອນມົນລະພິດທາງອາກາດ

ຈາກໂຮງງານອຸດສາຫະກຳປຸງແຕ່ງ

ສະເໜີໂດຍ: ທ່ານ ນາງ ສີອໍາພອນ ແກ້ວຈໍາປາ, ວິຊາການ ພະແນກສິ່ງແວດລ້ອມ ແລະ ຄວາມປອດໄພອຸດສາຫະກຳ
ກົມອຸດສາຫະກຳ, ກະຊວງ ອຸດສາຫະກຳ ແລະ ການຄ້າ
ເບີໂທ: 020 58989000

I. ສະພາບລວມ

- **ໂຄງຮ່າງການຈັດຕັ້ງ**

ກົມອຸດສາຫະກຳ ປະກອບມີ 7 ພະແນກ ແລະ 1 ສູນການຜະລິດສະອາດ.

- **ພາລະບົດບາດຂອງກົມ**

ໃນການສົ່ງເສີມ, ພັດທະນາ ແລະ ຄຸ້ມຄອງວຽກງານອຸດສາຫະກຳປຸງແຕ່ງ, ເຂດ ແລະ ນິຄົມອຸດສາຫະກຳ ແລະ ວຽກງານໃຫ້ຂະຫຍາຍຕົວ ແລະ ປະກອບສ່ວນປະຕິບັດແນວທາງນະໂຍບາຍຂອງພັກ ແລະ ລັດຖະບານວ່າງອອກ ໃນການຫັນອຸດສາຫະກຳໃຫ້ເປັນທັນສະໄໝ, ສີຂຽວ ແລະ ຍືນຍົງ ໃນຂອບເຂດທົ່ວປະເທດ.

- **ສະຖິຕິໂຮງງານອຸດສາຫະກຳປຸງແຕ່ງ ຂັ້ນຄຸ້ມຄອງ ແບ່ງຕາມແຂວງ ແລະ ຂະໜາດໂຮງງານ.**

ປະກອບມີ ທັງໝົດ 3.992 ໂຮງງານທົ່ວປະເທດ ແລະ ໜາດໃຫ່ຍ 459 ໂຮງງານ, ຂະໜາດກາງ 681 ໂຮງງານ ແລະ ຂະໜາດນ້ອຍ 2.852 ໂຮງງານ.

II. ນະໂຍບາຍ, ກົດໝາຍ ແລະ ລະບຽບການ

1. ກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ເລກທີ 48/ສພຊ (2013);
2. ກົດໝາຍວ່າດ້ວຍການຄຸ້ມຄອງເຄມີ 07/ສພຊ (2016);
3. ຂໍ້ກຳນົດວ່າດ້ວຍການປ່ອຍນ້ຳເປື້ອນ ແລະ ນ້ຳເສຍຄຸນຈາກໂຮງງານອຸດສາຫະກຳປຸງແຕ່ງ ເລກທີ 326/ອຫ (2005);
4. ຂໍ້ຕົກລົງວ່າດ້ວຍມາດຕະຖານອາກາດທີ່ປ່ອຍຈາກໂຮງງານອຸດສາ ຫະກຳປຸງແຕ່ງ ເລກທີ 2062/ອຄ (2009);
5. ຂໍ້ຕົກລົງວ່າດ້ວຍການສ້າງຕັ້ງໜ່ວຍງານສິ່ງແວດລ້ອມ ແລະ ເຄມີ ປະຈຳໂຮງງານ ເລກທີ 1155/ອຄ (2010);
6. ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງສິ່ງເສດເຫຼືອຈາກໂຮງງານອຸດສາ ຫະກຳປຸງແຕ່ງ ແລະ ຫັດຖະກຳ 0555/ອຄ (2012).
7. ກົດໝາຍ ແລະ ລະບຽບການກ່ຽວຂ້ອງອື່ນໆ

ດ້ານກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ສະບັບເລກທີ 48/ສພຊ, ລົງວັນທີ 27 ທັນວາ 2013



ມາດຕາ 24 (ໃໝ່) ລະດັບຄວາມສ່ຽງຜົນກະທົບດ້ານສິ່ງແວດລ້ອມຂອງໂຮງງານ ອີງໃສ່ຄວາມສຳຄັນ ແລະ ຈຳເປັນໃນການຄວບຄຸມເພື່ອປ້ອງກັນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມນັ້ນ ຄວາມສ່ຽງຜົນກະທົບດ້ານສິ່ງແວດລ້ອມຂອງໂຮງງານໄດ້ແບ່ງອອກເປັນ 3 ລະດັບດັ່ງນີ້ :

- ລະດັບໜຶ່ງ ແມ່ນໂຮງງານທີ່ມີຄວາມສ່ຽງຜົນກະທົບດ້ານສິ່ງແວດລ້ອມ ຫຼື ຄວາມເປັນອັນຕະລາຍໃນລະ ດັບຕ່ຳ ຊຶ່ງຕ້ອງປະຕິບັດຕາມລະບຽບການຄຸ້ມຄອງ ແລະ ຄວບຄຸມໂຮງງານໃຫ້ເຂັ້ມງວດ.
- ລະດັບສອງ ແມ່ນໂຮງງານທີ່ມີຄວາມສ່ຽງຕໍ່ຜົນກະທົບດ້ານສິ່ງແວດລ້ອມ ຫຼື ຄວາມເປັນອັນຕະລາຍໃນລະດັບປານກາງ ຊຶ່ງຕ້ອງສ້າງແຜນການຄຸ້ມຄອງດ້ານສິ່ງແວດລ້ອມ ແລະ ຕິດຕາມເປັນແຕ່ລະໄລຍະ.
- ລະດັບສາມ ແມ່ນໂຮງງານທີ່ມີຄວາມສ່ຽງຕໍ່ຜົນກະທົບດ້ານສິ່ງແວດລ້ອມ ຫຼື ຄວາມເປັນອັນຕະລາຍ ໃນລະດັບສູງ ຊຶ່ງຕ້ອງສ້າງແຜນການຄຸ້ມຄອງດ້ານສິ່ງແວດລ້ອມ, ຕ້ອງມີການວາງແຜນການຄຸ້ມຄອງດ້ານສິ່ງແວດລ້ອມຢ່າງເຂັ້ມງວດ ແລະ ຕິດຕາມເປັນປະຈຳ.

ມາດຕາ 25 (ປັບປຸງ) ມາດຕະການປົກປັກຮັກສາສິ່ງແວດລ້ອມ

- ການດຳເນີນກິດຈະການໂຮງງານ ຕ້ອງດຳເນີນຕາມມາດຕະການປົກປັກຮັກສາສິ່ງແວດລ້ອມ ດັ່ງນີ້ :
- ຮັບປະກັນການປະຕິບັດມາດຕະຖານຕາມສິ່ງແວດລ້ອມ ເປັນຕົ້ນ ນ້ຳເປື້ອນ, ສຽງ, ແສງ, ສີ, ກິ່ນ, ອາຍພິດຝຸ່ນ, ຄວັນ, ແຮງສັ່ນສະເທືອນ, ອຸນຫະພູມ, ຄວາມຊຸ່ມ ແລະ ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ ແລະ ລະບຽບກົດໝາຍອື່ນທີ່ກ່ຽວ ຂ້ອງ.
- ຮັບປະກັນເຮັດໃຫ້ໂຮງງານທີ່ມີຄວາມສ່ຽງໃນລະດັບຕ່ຳທີ່ສຸດ, ມີເຂດກັນຊົນຕ່ຳສຸດບໍ່ໜ້ອຍສີ່ແມັດ, ໂຮງງານທີ່ມີຄວາມສ່ຽງລະດັບສອງ ຕ້ອງມີເຂດກັນຊົນບໍ່ໜ້ອຍສິບແມັດ ແລະ ໂຮງງານທີ່ມີຄວາມສ່ຽງໃນລະດັບສາມ ຕ້ອງມີເຂດກັນຊົນບໍ່ໜ້ອຍຊາວແມັດ ຕາມແຕ່ລະກໍລະນີ.
- ຕ້ອງມີການປະສານສົມທົບລະຫວ່າງຂະແໜງການອຸດສາຫະກຳ ແລະ ການຄ້າກັບຂະແໜງການອື່ນທີ່ກ່ຽວຂ້ອງ.

ກົດໝາຍວ່າດ້ວຍການຄຸ້ມຄອງເຄມີສະບັບເລກທີ 07/ສພຊ, ລົງວັນທີ 10 ພະຈິກ 2016



ມາດຕາ 20 ການເກັບຮັກສາສິ່ງເສດເຫຼືອເຄມີອັນຕະລາຍ

ສິ່ງເສດເຫຼືອເຄມີອັນຕະລາຍ ແມ່ນ ສິ່ງເສດເຫຼືອທີ່ເກີດຈາກການປົນເປື້ອນ, ຜະລິດຕະພັນ, ການນຳໃຊ້ ຫຼື ຈາກຜະລິດຕະພັນອື່ນ ທີ່ມີສ່ວນປະສົມຂອງເຄມີອັນຕະລາຍທີ່ບໍ່ຕ້ອງການນຳໃຊ້ແລ້ວ ຊຶ່ງອາດມີຜົນກະທົບຕໍ່ສຸຂະພາບ, ຊີວິດ, ຊັບສິນ ແລະ ສິ່ງແວດລ້ອມ.

ສິ່ງເສດເຫຼືອເຄມີອັນຕະລາຍ ຕ້ອງເກັບຮັກສາໃຫ້ຖືກຕ້ອງຕາມມາດຕະຖານຄວາມປອດໄພ ເປັນຕົ້ນ ແຍກປະເພດສິ່ງເສດເຫຼືອ, ໃສ່ພາຊະນະບັນຈຸ ແລະ ມີສະຖານທີ່ເກັບມ້ຽນສະເພາະ.

ມາດຕາ 23 ການບຳບັດ ແລະ ການກຳຈັດສິ່ງເສດເຫຼືອເຄມີ

ສິ່ງເສດເຫຼືອເຄມີຈາກການດຳເນີນທຸລະກິດ ແລະ ການນຳໃຊ້ ຕ້ອງບຳບັດ ຫຼື ກຳຈັດໂດຍທັນທີ, ໃນກໍລະນີທີ່ບໍ່ສາມາດບຳບັດ ຫຼື ກຳຈັດໄດ້ນັ້ນ ກໍສາມາດເກັບຮັກສາໄວ້ ແຕ່ສູງສຸດບໍ່ໃຫ້ເກີນ ເກົ້າສິບວັນ ນັບແຕ່ມີສິ່ງເສດເຫຼືອ ແລະ ຕ້ອງແຈ້ງໃຫ້ຂະແໜງການອຸດສາຫະກຳ ແລະ ການຄ້າ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ.

ການບຳບັດ ແລະ ການກຳຈັດສິ່ງເສດເຫຼືອເຄມີ ຕ້ອງປະຕິບັດຕາມຄູ່ມືແນະນຳ ໂດຍນຳໃຊ້ເຕັກໂນໂລຊີທີ່ເໝາະສົມ ແລະ ປະຕິບັດຕາມກົດໝາຍວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ, ກົດໝາຍ ແລະ ລະບຽບການອື່ນ ທີ່ກ່ຽວຂ້ອງ.

ຂໍ້ກຳນົດກ່ຽວກັບການປ່ອຍນ້ຳເປື້ອນ ແລະ ນ້ຳເສຍຄຸນອອກຈາກໂຮງງານອຸດສາຫະກຳປຸງແຕ່ງ

ຂໍ້ກຳນົດກ່ຽວກັບການປ່ອຍນ້ຳເປື້ອນ ແລະ ນ້ຳເສຍຄຸນອອກຈາກໂຮງງານອຸດສາຫະກຳປຸງແຕ່ງ ເລກທີ 326/ອຫ, ລົງວັນທີ 06 ຕຸລາ 2005



ຂໍ້ກຳນົດກ່ຽວກັບການປ່ອຍນ້ຳເປື້ອນ ແລະ ນ້ຳເສຍຄຸມອອກຈາກໂຮງງານ ອຸດສາຫະກຳປຸງແຕ່ງ

ໂຮງງານທີ່ມີນ້ຳເສຍຕ້ອງປະຕິບັດ ດັ່ງນີ້



1. ສ້າງລະບົບບຳບັດນ້ຳເສຍ;
2. ກ່ອນການກໍ່ສ້າງລະບົບບຳບັດນ້ຳເສຍ ຕ້ອງຍື່ນຄຳຮ້ອງ ແລະ ແຜນຜັງລະບົບບຳນ້ຳເສຍຂອງໂຮງງານ ພ້ອມທັງການອະທິບາຍລະອຽດ ມາຍັງກົມ ກອກ ຫຼື ພະແນກ ອຄ ເພື່ອພິຈາລະນາຢັ້ງຢືນ(**ມາດຕາ 7**)
3. ການບຳບັດນ້ຳເສຍໃຫ້ໄດ້ຕາມມາດຕະຖານ ຕາມທີ່ກຳນົດໃນ ມາດຕາ 6.

ຂໍ້ກຳນົດກ່ຽວກັບການປ່ອຍນ້ຳເປື້ອນ ແລະ ນ້ຳເສຍຄຸນອອກຈາກໂຮງງານ ອຸດສາຫະກຳປຸງແຕ່ງ

1. ໂຮງງານນ້ຳຕານ:

ປັດໃຈປະກອບ		ຫົວໜ່ວຍ	ຄ່າ(ບໍ່ເກີນ)
ເບໂອດີ$_5$	BOD_5	mg/l	60
ເສດຂ້ອນທີ່ລະລາຍທັງໝົດ	TSS	mg/l	100
ຄ່າ ກົດ–ດັ່ງ	pH		ລະຫວ່າງ 6–9.5

2. ໂຮງງານຕໍ່າແຜ່ນ, ຕັດຫີຍບທີ່ມີການຟອກ- ຍ້ອມ:

ປັດໃຈປະກອບ		ຫົວໜ່ວຍ	ຄ່າ(ບໍ່ເກີນ)
ເບໂອດີ$_5$	BOD_5	mg/l	40
ເຝໂນນ	Phenols	mg/l	1
ເສດຂ້ອນທີ່ລະລາຍທັງໝົດ	TSS	mg/l	40
ຄ່າ ກົດ–ດັ່ງ	pH		ລະຫວ່າງ 6–9.5

3. ໂຮງງານຝຸ່ນເຈັ້ຍ ແລະ ຜະລິດເຈັ້ຍ:

3.1 ໂຮງງານຝຸ່ນເຈັ້ຍ:

ປັດໃຈປະກອບ		ຫົວໜ່ວຍ	ຄ່າ(ບໍ່ເກີນ)
ເບໂອດີ$_5$	BOD_5	mg/l	90
ອັມໂມເນຍ ນີໂຕຣເຊນ	Ammonia Nitrogen	mg/l	7
ເຝໂນນ	Phenols	mg/l	1

5.1 ມາດຕະຖານສຳລັບໂຮງງານຫົວໄປ:

ປັດໃຈປະກອບ		ຫົວໜ່ວຍ	ຄ່າ(ບໍ່ເກີນ)
ເບໂອດີ$_5$	BOD_5	mg/l	30
ອັມໂມເນຍ ນີໂຕຣເຊນ	Ammonia Nitrogen	mg/l	4.0
ເສດຂ້ອນທີ່ລະລາຍທັງໝົດ	TSS	mg/l	30
ຄ່າ ກົດ–ດັ່ງ	pH		ລະຫວ່າງ 6–9.5
ທາດລະລາຍທັງໝົດ	TDS	mg/l	3,500
ເຝໂນນ	Phenols	mg/l	0.3
ຝົສະຝໍຣ	Phosphorous	mg/l	1.0
ທາດເງີນ	Silver	mg/l	0.1
ສັງກະສີ	Zinc	mg/l	1.0
ຊູນຟິດ	Sulphide	mg/l	1.0
ກຣໍລາຍອິດສະລະ	Free Chrorine	mg/l	1.0
ກຣໍລິດ	Chloride	mg/l	500
ເຫັລກ	Iron	mg/l	2.0
ຝຣໍລິດ	Flouride	mg/l	15
ໄຊຍາໄນ	Cyanide	mg/l	0.1
ທອງ	Copper	mg/l	0.5
ຊີນ	Lead	mg/l	0.2
ນ້ຳມັນ ແລະ ໄຂມັນ	Oil and Grease	mg/l	5
ນິເກນ	Nickel	mg/l	0.2
ບາຫລອດ	Mercury	mg/l	0.005
ມັງການີດ	Manganese	mg/l	1.0
ອາເຊນິກ	Arsenic	mg/l	0.25
ບາລິອອມ	Barium	mg/l	1.0

ຂໍ້ຕົກລົງ ວ່າດ້ວຍມາດຕະຖານອາກາດທີ່ປ່ອຍອອກຈາກໂຮງງານອຸດສາຫະກຳປຸງແຕ່ງ

ຂໍ້ຕົກລົງ ວ່າດ້ວຍມາດຕະຖານອາກາດທີ່ປ່ອຍອອກຈາກໂຮງງານອຸດສາຫະກຳປຸງແຕ່ງ ເລກທີ 2062/ອຄ, ລົງວັນທີ 14 ຕຸລາ 2009



ຂໍ້ຕົກລົງ ວ່າດ້ວຍມາດຕະຖານອາກາດທີ່ປ່ອຍອອກຈາກໂຮງງານອຸດສາຫະກຳປຸງແຕ່ງ

ໂຮງງານທີ່ມີການປ່ອຍມົນລະພິດທາງອາກາດຕ້ອງປະຕິບັດ ດັ່ງນີ້



1. ຕ້ອງອອກແບບ ແລະ ຕິດຕັ້ງລະບົບບຳບັດອາກາດ ໂດຍໄດ້ຮັບການເຫັນດີຈາກ ກົມ ກອກ ຫຼື ພະແນກ ອຄ ກ່ອນ (ມາດຕາ4).
2. ບຳບັດອາກາດໃຫ້ໄດ້ຕາມມາດຕະຖານກຳນົດ (ມາດຕາ 3)
3. ຕ້ອງກວດກາ, ວັດແທກປະລິມານມົນລະພິດທີ່ປ່ອຍອອກຢ່າງໜ້ອຍ 2 ຄັ້ງ/ປີ (ມາດຕາ4)
4. ການປ່ອຍມົນລະພິດອອກສູ່ສິ່ງແວດລ້ອມ ຕ້ອງໄດ້ຮັບການເຫັນດີ ຫຼື ຢັ້ງຢືນ ຈາກກົມ ກອກ ຫຼື ພະແນກ ອຄ ກ່ອນ. (ໃບຢັ້ງຢືນການປ່ອຍ).
5. ການປັບປຸງ, ປ່ຽນແປງລະບົບບຳບັດອາກາດ ຕ້ອງໄດ້ຮັບການເຫັນດີ ຈາກຂະແໜງການອຸດສາຫະກຳ ແລະ ການຄ້າ.

ຂໍ້ຕົກລົງ ວ່າດ້ວຍມາດຕະຖານອາກາດທີ່ປ່ອຍອອກຈາກໂຮງງານອຸດສາຫະກຳປຸງແຕ່ງ

ຊະນິດທາດພິດ	ຫົວໜ່ວຍ	ແຫຼ່ງທີ່ມາ	ມາດຕະຖານ	
			ບໍ່ມີການເຜົາໄໝ້	ມີການເຜົາໄໝ້
ຝຸ່ນລວມ TSP	mg/m^3	- ນ້ຳມັນທຸກປະເພດ - ຖ່ານຫີນ, ສິ່ງເສດເຫຼືອ, ເຊື້ອເພີ່ງອື່ນ - ຫຼອມ, ຮີດ, ດຶ່ງ ໂລຫະ - ການຜະລິດທົ່ວໄປ	- - 360 460	300 400 300 400
Antimony–Sb	mg/m^3	ການຜະລິດທົ່ວໄປ	24	20
Arsenic–As	mg/m^3	ການຜະລິດທົ່ວໄປ	24	20
Copper–Cu	mg/m^3	ການຜະລິດທົ່ວໄປ	36	30
Lead–Pb	mg/m^3	ການຜະລິດທົ່ວໄປ	36	30
Mercury–Hg	mg/m^3	ການຜະລິດທົ່ວໄປ	3,6	3
Chlorine–Cl	mg/m^3	ການຜະລິດທົ່ວໄປ	36	30
PM 2.5	mg/m^3	ສະຖານທີ່ເຮັດວຽກ	0.15	-

ຂໍ້ຕົກລົງ ວ່າດ້ວຍມາດຕະຖານອາກາດທີ່ປ່ອຍອອກຈາກໂຮງງານອຸດສາຫະກຳປຸງແຕ່ງ

ຊະນິດທາດພິດ	ຫົວໜ່ວຍ	ແຫຼ່ງທີ່ມາ	ມາດຕະຖານ	
			ບໍ່ມີການເຜົາໄໝ້	ມີການເຜົາໄໝ້
Sulfuric acid-H_2SO_4	ppm	ການຜະລິດທົ່ວໄປ	25	-
Hydrogen sulfide-H_2S	ppm	ການຜະລິດທົ່ວໄປ	100	80
Carbon monoxide-CO	ppm	ການຜະລິດທົ່ວໄປ	870	690
Sulfur dioxide -SO_2	ppm	- ນ້ຳມັນ - ຖ່ານຫີນ - ສິ່ງເສດເຫຼືອ - ອື່ນໆ ການຜະລິດທົ່ວໄປ	- - - - 500	950 700 50 50 -
Nitrogen Oxides-NO_x	ppm	- ນ້ຳມັນ,ສິ່ງເສດເຫຼືອ, ອື່ນໆ - ຖ່ານຫີນ	- -	200 400
xylene	ppm		200	-
Cresol	ppm		5	-

ຂໍ້ຕົກລົງວ່າດ້ວຍການສ້າງຕັ້ງໜ່ວຍງານສິ່ງແວດລ້ອມ ແລະ ເຄມີ ປະຈຳໂຮງງານ

ຂໍ້ຕົກລົງວ່າດ້ວຍການສ້າງຕັ້ງໜ່ວຍງານ
ສິ່ງແວດລ້ອມ ແລະ ເຄມີ ປະຈຳໂຮງງານ
ເລກທີ 1155/ອຄ (2010)

ປະກອບມີ 7 ໝວດ ແລະ 13 ມາດຕາ



ຂໍ້ຕົກລົງ

ວ່າດ້ວຍການສ້າງຕັ້ງໜ່ວຍງານສິ່ງແວດລ້ອມ ແລະ ເຄມີ ປະຈຳໂຮງງານ

ໝວດທີ 1

ຫຼັກການທົ່ວໄປ

ມາດຕາ 1. ຈຸດປະສົງ

ຂໍ້ຕົກລົງວ່າດ້ວຍການສ້າງຕັ້ງໜ່ວຍງານສິ່ງແວດລ້ອມ ແລະ ເຄມີ ປະຈຳໂຮງງານ

ມາດຕາ 3 ການສ້າງຕັ້ງໜ່ວຍງານສິ່ງແວດລ້ອມ ແລະ ເຄມີປະຈຳໂຮງງານ

ໂຮງງານທີ່ກຳນົດໃນມາດຕາ 6 ຂອງຂໍ້ຕົກລົງສະບັບນີ້ ຕ້ອງສ້າງຕັ້ງໜ່ວຍງານ ຫຼື ພະແນກຄຸ້ມຄອງສິ່ງແວດລ້ອມ ແລະ ເຄມີປະຈຳໂຮງງານຂຶ້ນ (ຕາມເງື່ອນໄຂຂອງໂຮງງານ) ເພື່ອຄຸ້ມຄອງສິ່ງແວດລ້ອມ ແລະ ເຄມີ ຂອງຕົນ.

ໜ່ວຍງານຄຸ້ມຄອງສິ່ງແວດລ້ອມ ແລະ ເຄມີ ອາດປະກອບດ້ວຍພະນັກງານວິຊາການຄຸ້ມຄອງສິ່ງແວດລ້ອມ (ຜູ້ຄຸ້ມຄອງສິ່ງແວດລ້ອມ) 02 ຄົນຂຶ້ນໄປ.

ໜ່ວຍງານສິ່ງແວດລ້ອມ ແລະ ເຄມີ ອາດປະກອບດ້ວຍ ຫົວໜ້າໜ່ວຍງານ, ຮອງຫົວໜ້າໜ່ວຍງານ ແລະ ວິຊາການ ຫຼື ອາດສ້າງຕັ້ງຂຶ້ນຕາມຄວາມສາມາດ ຫຼື ຕາມຄວາມເໝາະສົມຂອງໂຮງງານກໍ່ໄດ້.

ຂໍ້ຕົກລົງວ່າດ້ວຍການສ້າງຕັ້ງໜ່ວຍງານສິ່ງແວດລ້ອມ ແລະ ເຄມີ ປະຈຳໂຮງງານ

ມາດຕາ 4 ປະເພດວິຊາການຄຸ້ມສິ່ງແວດລ້ອມ ແລະ ເຄມີປະຈຳໂຮງງານ

ວິຊາການຄຸ້ມຄອງສິ່ງແວດລ້ອມ ແລະ ເຄມີ ໄດ້ຈັດແບ່ງເປັນຫຼາຍປະເພດ ດັ່ງນີ້:

1. ວິຊາການຄຸ້ມຄອງສິ່ງແວດລ້ອມທົ່ວໄປ
2. ວິຊາການຄວບຄຸມມົນລະພິດທາງນ້ຳ
3. ວິຊາການຄວບຄຸມມົນລະພິດທາງອາກາດ
4. ວິຊາການຄວບຄຸມເຄມີ
5. ວິຊາການຄວບຄຸ້ມສິ່ງເສດເຫຼືອປະເພດແຂງ ແລະ ອື່ນໆ

ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງສິ່ງເສດເຫຼືອຈາກໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ

ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງສິ່ງເສດເຫຼືອຈາກໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ສະບັບເລກທີ 0555/ອຄ, ລົງວັນທີ 20 ມີນາ 2012



ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງສິ່ງເສດເຫຼືອຈາກໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ

ມາດຕາ 4 ປະເພດສິ່ງເສດເຫຼືອ

ສິ່ງເສດເຫຼືອຈາກໂຮງງານອຸດສາຫະກຳປຸງແຕ່ງ ແບ່ງອອກເປັນ 02 ປະເພດ ຄື:

1. **ສິ່ງເສດເຫຼືອອັນຕະລາຍ**

- ສິ່ງເສດເຫຼືອເຄມີ ແລະ ພາຊະນະບັນຈຸເຄມີ
- ສິ່ງເສດເຫຼືອທີ່ເປັນທາດກຳມັນຕະພາບລັງສີ
- ຕະກອນທີ່ມີການປົນເປື້ອນເຄມີ
- ສິ່ງເສດເຫຼືອອັນຕະລາຍອື່ນໆ

2. **ສິ່ງເສດເຫຼືອທີ່ບໍ່ເປັນອັນຕະລາຍ**







ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງສິ່ງເສດເຫຼືອຈາກໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ

ມາດຕາ 7 ສະຖານທີ່ທ້ອນໂຮມສິ່ງເສດເຫຼືອ

ໂຮງງານຕ້ອງມີສະຖານທີ່ທ້ອນໂຮມ/ເກັບຮັກສາສິ່ງເສດເຫຼືອຢ່າງເໝາະສົມ ຄື:

- ຕ້ອງມີເນື້ອທີ່ກວ້າງຂວາງ (ພຽງພໍກັບປະລິມານສິ່ງເສດເຫຼືອ)
- ມີອ່າງ/ພາຊະນະຮອງຮັບທີ່ແໜ້ນໜາແຂງແຮງ
- ສະດວກໃນການຂົນສົ່ງ
- ມີຮົ້ວກັນ
- ມີປ້າຍເຕືອນ
- ມີການຈັດແບ່ງເຂດເກັບມ້ຽນຕາມປະເພດສິ່ງເສດເຫຼືອ
- ມີຫຼັງຄາ ແລະ ອື່ນໆ



ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງສິ່ງເສດເຫຼືອຈາກໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ

ມາດຕາ 8 ການທ້ອນໂຮມ ແລະ ການເກັບຮັກສາສິ່ງເສດເຫຼືອ

1. ຜູ້ຜະລິດສິ່ງເສດເຫຼືອຕ້ອງໄດ້ແຍກ ແລະ ຈັດເກັບສິ່ງເສດເຫຼືອ ໃສ່ພາຊະນະບັນຈຸຕາມປະເພດແລ້ວເກັບຮັກສາໃນສະຖານທີ່ທ້ອນໂຮມ ກ່ອນນຳໄປກຳຈັດ ຫຼື ບຳບັດ
2. ເວລາໃນການເກັບຮັກສາແມ່ນຂຶ້ນກັບປະເພດຂອງສິ່ງເສດເຫຼືອ, ແຕ່**ສູງສຸດບໍ່ເກີນ 60 ວັນ.** ໃນກໍລະນີສິ່ງເສດເຫຼືອອັນຕະລາຍ ແລະ ບໍ່ສາມາດເກັບຮັກສາໄວ້ດົນ ຕ້ອງໄດ້ນຳໄປກຳຈັດ ຫຼື ບຳບັດ ໂດທັນທີ, ແຕ່ຖ້າຈະເກັບຮັກສາໄວ້ເກັບໄລຍະເວລາທີ່ກຳນົດຕ້ອງໄດ້ລາຍງານເປັນລາຍລັກອັກສອນໃຫ້ກົມອຸດສາຫະກຳ, ພະແນກອຸດສາຫະກຳ ແລະ ການຄ້າແຂວງ ພິຈາລະນາ.
3. ຕ້ອງມີຜູ້ຮັບຜິດຊອບໃນການຄຸ້ມຄອງສິ່ງເສດເຫຼືອພາຍໃນໂຮງງານ
4. ຕ້ອງຮັບປະກັນດ້ານຄວາມປອດໄພ ເຊັ່ນ: ຕ້ອງບໍ່ໃຫ້ເກີດ ການຮົ່ວໄຫຼ, ອັກຄີໄພ, ລະເບີດ ແລະ ອື່ນໆ



ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງສິ່ງເສດເຫຼືອຈາກໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ

ມາດຕາ 9 ການເຄື່ອນຍ້າຍ ຫຼື ຂົນສົ່ງສິ່ງເສດເຫຼືອ

1. ກ່ອນນຳເອົາສິ່ງເສດເຫຼືອອັນຕະລາຍອອກຈາກໂຮງງານທຸກຄັ້ງ ຕ້ອງແຈ້ງຂໍ້ມູນລາຍລະອຽດຕໍ່ກົມອຸດສາຫະກຳ, ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ ຊາບ ແລະ ຖ້າຈຳເປັນຈະໄດ້ລົງໄປຕິດຕາມກວດກາເບິ່ງຄວາມພ້ອມໃນການຂົນສົ່ງ ເຊັ່ນ: ການບັນຈຸ, ຫຸ້ມຫໍ່, ຕິດສະຫຼາກ ແລະ ອື່ນໆ ເພື່ອບໍ່ໃຫ້ເກີດອຸບປະຕິເຫດ, ການຕົກເຮ່ຍໃນເວລາຂົນສົ່ງ ຫຼື ນຳໄປຖິ້ມແບບຊະຊາຍ.
2. ຜູ້ຂົນສົ່ງສິ່ງເສດເຫຼືອອັນຕະລາຍຕ້ອງເປັນຜູ້ທີ່ມີຄວາມຮູ້ດ້ານວິຊາສະເພາະກ່ຽວຂ້ອງ ແລະ ມີປະສົບການເຮັດວຽກດ້ານນີ້ຢ່າງໜ້ອຍ 2 ປີ
3. ການຂົນສົ່ງສິ່ງເສດເຫຼືອອັນຕະລາຍຕ້ອງປະຕິບັດຕາມລະບຽບການຂອງຂະແໜງການທີ່ກ່ຽວຂ້ອງ





ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງສິ່ງເສດເຫຼືອຈາກໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ

ມາດຕາ 10 ການບຳບັດ ຫຼື ກຳຈັດສິ່ງເສດເຫຼືອ

1. ສິ່ງເສດເຫຼືອທີ່ບໍ່ເປັນອັນຕະລາຍ ຈາກໂຮງງານ ສາມາດນຳໄປກຳຈັດ ຫຼື ບຳບັດຄືກັບສິ່ງເສດເຫຼືອທົ່ວໄປຈາກອາຄານບ້ານເຮືອນ ຕາມສະຖານທີ່ທີ່ທາງການອະນຸຍາດ
2. ສິ່ງເສດເຫຼືອອັນຕະລາຍ ຕ້ອງແຍກອອກຈາກສິ່ງເສດເຫຼືອປະເພດອື່ນແລ້ວ ນຳໄປກຳຈັດ ຫຼື ບຳບັດດ້ວຍວິທີທີ່ເໝາະສົມ ເຊັ່ນ: ນຳໄປເຜົາໃນເຕົາເຜົາສະເພາະ ຫຼື ຝັງກົບຢ່າງຖືກສຸກຂະລັກສະນະຕາມສະຖານທີ່ ທີ່ທາງການກຳນົດໄວ້. ໃນກໍລະນີທີ່ບໍ່ສາມາດກຳຈັດໄດ້ພາຍໃນປະເທດຈະຕ້ອງໄດ້ຈັດສົ່ງກັບຄືນບໍລິສັດເດີມ ຫຼື ໄປກຳຈັດຢູ່ປະເທດອື່ນທີ່ກຳຈັດໄດ້





ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງສິ່ງເສດເຫຼືອຈາກໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ

ມາດຕາ 12 ຂໍ້ຫ້າມ

1. ຫ້າມນຳເອົາສິ່ງເສດເຫຼືອປະເພດອັນຕະລາຍປົນກັນ ຫຼື ປົນກັບສິ່ງເສດເຫຼືອທີ່ບໍ່ເປັນອັນຕະລາຍ
2. ຫ້າມຂົນສົ່ງສິ່ງເສດເຫຼືອອັນຕະລາຍທີ່ບໍ່ໄດ້ບັນຈຸ, ຫຸ້ມຫໍ່ ແລະ ຕິດສະຫຼາກ.
3. ຫ້າມຖິ້ມ ຫຼື ຖອກເທສິ່ງເສດເຫຼືອທຸກປະເພດໃສ່ສະຖານທີ່ຕ່າງໆ ເຊັ່ນ; ສະຖານທີ່ສ່ວນຕົວ ຫຼື ສາທາລະນະ, ຮ່ອງລະບາຍນ້ຳສາທາລະນະ, ແຫຼ່ງນ້ຳທຳມະຊາດ ແລະ ອື່ນໆ
4. ຫ້າມຈູດ ຫຼື ເຜົາສິ່ງເສດເຫຼືອທຸກປະເພດດ້ວຍລະບົບເປີດ ຫຼື ບໍ່ຖືກຕ້ອງຕາມເຕັກນິກ
5. ຫ້າມນຳເອົາພາຊະນະບັນເຄມີອັນຕະລາຍ ໄປໃຊ້ຄືນ, ເອົາໃຫ້ປະຊາຊົນນຳໃຊ້ ຫຼື ຂາຍທ໋ອໄປ.
6. ຫ້າມບັນຈຸສິ່ງເສດເຫຼືອລົ້ນຖົງ, ຖັງ ແລະ ພາຫະນະຂົນສົ່ງ.

ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງສິ່ງເສດເຫຼືອຈາກໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ

ມາດຕາ 19 ມາດຕະການຕໍ່ຜູ້ລະເມີດ

ຜູ້ຜະລິດສິ່ງເສດເຫຼືອທີ່ລະເມີດຂໍ້ຕົກລົງສະບັບຈະຖືກປັບໃໝ ແລະ ໃສ່ໂທດ ຕາມກໍລະນີໜັກ ຫຼື ເບົາ ດັ່ງນີ້:

1. ເຮັດບົດບັນທຶກຕັກເຕືອນ ພ້ອມທັງໃຫ້ຄຳປຶກສາ ຫຼື ແນະນຳວິທີການປັບປຸງລະບົບເກັບຮັກສາ ແລະ ບຳບັດ ກຳຈັດສິ່ງເສດເຫຼືອ
2. ຢຸດຕິການດຳເນີນກິດຈະການຊົ່ວຄາວ ເພື່ອປັບປຸງລະບົບເກັບຮັກສາ, ເຕັກນິກ ຫຼື ວິທີການບຳບັດ, ກຳຈັດສິ່ງເສດເຫຼືອ
3. ຖອນໃບອະນຸຍາດດຳເນີນກິດຈະການໂຮງງານ, ປັບໃໝ ແລະ ໃສ່ໂທດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ

ການຈັດຕັ້ງປະຕິບັດລະບົບຄຸ້ມຄອງສິ່ງເສດເຫຼືອອຸດສາຫະກຳ

ເພື່ອຮັບປະກັນການຄຸ້ມຄອງສິ່ງເສດເຫຼືອອຸດສາຫະກຳ ໃຫ້ຖືກຕ້ອງຕາມຫຼັກວິຊາການ, ສອດຄ່ອງກັບກົດໝາຍ ແລະ ລະບຽບການ ຮັບປະກັນຄວາມປອດໄພຕໍ່ສຸຂະພາບ, ຊີວິດ, ຊັບສິນ ແລະ ສິ່ງແວດລ້ອມ ກົມອຸດສາຫະກຳ ຈຶ່ງໄດ້ຮ່ວມມືກັບສູນ EMAC, ຄະນະວິທະຍາສາດສິ່ງແວດລ້ອມ, ມຊ ພັດທະນາ ລະບົບຕິດຕາມກວດກາການຂົນສົ່ງ, ການກຳຈັດ ແລະ ບຳບັດສິ່ງເສດເຫຼືອຈາກໂຮງງານອຸດສາຫະກຳ ຫຼື ເອີ້ນວ່າ MANIFEST System



ການຈັດຕັ້ງປະຕິບັດລະບົບຄຸ້ມຄອງສິ່ງເສດເຫຼືອອຸດສາຫະກຳ

ຜົນປະໂຫຍດທີ່ຄາດວ່າຈະໄດ້ຮັບຈາກການຕັດຕັ້ງ ປະຕິບັດ MANIFEST System ປະກອບມີ:

1. ເພີ່ມປະສິດຕິພາບໃນການຄຸ້ມຄອງ ຕິດຕາມກວດກາ ສິ່ງເສດເຫຼືອອຸດສາຫະກຳ
2. ມີຂໍ້ມູນທີ່ອັບເດດ ແລະ ຊັດເຈນ
3. ປະຕິບັດໄດ້ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ
4. ປະກອບສ່ວນໃນການພັດທະນາຕາມທິດສີຂຽວ ແລະ ຍືນຍົງ
5. ເປັນເງື່ອນໄຂໃນການສະເໜີຂໍຢັ້ງຢືນອຸດສາຫະກຳສີຂຽວ, ສະຫຼາກສີຂຽວ ແລະ ອື່ນໆ.
6. ສ້າງພາບລັກທີ່ດີ ແລະ ໜ້າເຊື່ອຖື ຕໍ່ສັງຄົມ ແລະ ລູກຄ້າ
7. ຫຼຸດຜ່ອນຄວາມສ່ຽງ ແລະ ຄ່າໃຊ້ຈ່າຍ ໃນການແກ້ໄຂບັນຫາສິ່ງແວດລ້ອມ.



III. ແບບຟອມເກັບກຳຂໍ້ມູນດ້ານສິ່ງເສດເຫຼືອ

ແບບຟອມສອບຖາມກ່ຽວກັບການຄຸ້ມຄອງສິ່ງເສດເຫຼືອ

1. ຂໍ້ມູນທົ່ວໄປຂອງໂຮງງານ/ ບໍລິສັດ

- ຊື່ໂຮງງານ (ລາວ) .....
- ຊື່ບໍລິສັດ (ອັງກິດ) .....
- ທີ່ຕັ້ງໂຮງງານ .....
- ໃບຢັ້ງຢືນດຳເນີນກິດຈະການໂຮງງານ ເລກທີ.....
- ເລກທະບຽນວິສາຫະກິດ .....

2. ຜູ້ຮັບຜິດຊອບການຄຸ້ມຄອງສິ່ງແວດລ້ອມ (ສິ່ງເສດເຫຼືອ) ພາຍໃນໂຮງງານ

- ຊື່ ແລະ ນາມສະກຸນ ....
- ເບີໂທຕິດຕໍ່ .....
- ລະດັບຄວາມຮູ້ຄວາມເຂົ້າໃຈກ່ຽວກັບການຈັດເກັບ, ຄັດແຍກ ແລະ ກຳຈັດສິ່ງເສດເຫຼືອ

☐ ມີຄວາມເຂົ້າໃຈໜ້ອຍ ☐ ມີຄວາມເຂົ້າໃຈປານກາງ ☐ ມີຄວາມເຂົ້າໃຈຫຼາຍ

- ລະດັບຄວາມຮູ້ຄວາມເຂົ້າໃຈກ່ຽວກັບນິຕິກຳ ແລະ ກົດໝາຍກ່ຽວກັບສິ່ງເສດເຫຼືອ

☐ ມີຄວາມເຂົ້າໃຈໜ້ອຍ ☐ ມີຄວາມເຂົ້າໃຈປານກາງ ☐ ມີຄວາມເຂົ້າໃຈຫຼາຍ

- ທ່ານໄດ້ຮັບຂໍ້ມູນຂ່າວສານກ່ຽວກັບລະບຽບການຄຸ້ມຄອງສິ່ງເສດເຫຼືອຈາກໃສ?

.....

3. ຂໍ້ມູນກິດຈະກຳພາຍໃນໂຮງງານ

- ຜະລິດຕະພັນ ປະກອບມີຫຍັງແດ່: .....
  ກຳລັງການຜະລິດ/ ປີ .....
- ໂຮງງານຂອງທ່ານມີຫ້ອງທົດລອງເພື່ອກວດສອບຄຸນນະພາບຜະລິດຕະພັນ ຫຼື ບໍ່?
  ☐ ບໍ່ມີ; ☐ ມີ;
- ໂຮງງານຂອງທ່ານມີຫ້ອງປະຖິມພະຍາບານ ເບື້ອງຕົ້ນ ບໍ?
  ☐ ບໍ່ມີ; ☐ ມີ;
- ໂຮງງານຂອງທ່ານມີການສ້ອມແປງອຸປະກອນການຜະລິດ, ພາຫະນະ ບໍ?
  ☐ ບໍ່ມີ; ☐ ມີ;
- ໂຮງງານຂອງທ່ານມີລະບົບບຳບັດນ້ຳ ແລະ ລະບົບບຳບັດມົນລະພິດທາງອາກາດ ບໍ?
  ☐ ບໍ່ມີ; ☐ ມີ;
- ໂຮງງານຂອງທ່ານມີການນຳໃຊ້ສານເຄມີ ບໍ?
  ☐ ບໍ່ມີ; ☐ ມີ;
- ປະເພດສານເຄມີທີ່ນຳໃຊ້: ☐ ກົດ ຫຼື ດ່າງ
  ☐ ກາວ
  ☐ ສານສີ, ສານຍ້ອມ, ໝຶກພິມ
  ☐ ນ້ຳມັນໄຮໂດຼລິກ, ນ້ຳເຄື່ອງ, ນ້ຳມັນເກຍ
  ☐ ສານເຄມີທີ່ນຳໃຊ້ໃນຫ້ອງທົດລອງ
  ☐ ສານເຄມີທີ່ນຳໃຊ້ໃນລະບົບບຳບັດ
  ☐ ສານເຄມີກະສິກຳ (ປຸ໋ຍ, ຢາຂ້າຫຍ້າ, ຢາປາບສັດຕູພືດ)
  ☐ ອື່ນໆ; ລະບຸ.....

4. ຂໍ້ມູນການຄຸ້ມຄອງສິ່ງເສດເຫຼືອພາຍໃນໂຮງງານ

- ທ່ານມີການຄັດແຍກສິ່ງເສດເຫຼືອອຸດສາຫະກຳພາຍໃນໂຮງງານ ບໍ?
  ☐ ບໍ່ມີ; ☐ ມີ; ອະທິບາຍ.....
- ທ່ານມີການບັນທຶກຂໍ້ມູນປະລິມານສິ່ງເສດເຫຼືອແຕ່ລະຊະນິດ ບໍ?
  ☐ ບໍ່ມີ; ☐ ມີ;
- ທ່ານມີການບັນທຶກຂໍ້ມູນປະລິມານສິ່ງເສດເຫຼືອພາຍໃນໂຮງງານ ບໍ?
  ☐ ບໍ່ມີ; ☐ ມີ;
- ທ່ານໄດ້ກຳຈັດສິ່ງເສດເຫຼືອອຸດສາຫະກຳແນວໃດ?
  ☐ ກຳຈັດດ້ວຍຕົວເອງ; ອະທິບາຍ.....
  ☐ ຈ້າງບໍລິສັດກຳຈັດ; ອະທິບາຍ.....
- ປະຈຸບັນທ່ານສາມາດສ້າງລາຍໄດ້ (ຂາຍ) ຈາກສິ່ງເສດເຫຼືອພາຍໃນໂຮງງານ ບໍ?
  ☐ ບໍ່ມີ; ☐ ມີ;
- ທ່ານມີຄວາມກັງວົນກ່ຽວກັບການບຳບັດ-ກຳຈັດສິ່ງເສດເຫຼືອອຸດສາຫະກຳ ບໍ?
  ☐ ບໍ່ມີ; ☐ ມີ; ລະບຸ.....

5. ຂໍ້ມູນສິ່ງເສດເຫຼືອພາຍໃນໂຮງງານ (☑ ເລືອກສິ່ງເສດເຫຼືອທີ່ມີໃນໂຮງງານຂອງທ່ານ)

5.1. ສິ່ງເສດເຫຼືອຈາກການຜະລິດ

☐ ວັດສະດຸທີ່ບໍ່ເໝາະສົມກັບການບໍລິໂພກ ຫຼື ປຸງແຕ່ງມີ ປະມານ ..... Kg/ເດືອ

☐ ຜະລິດຕະພັນບໍ່ໄດ້ຄຸນນະພາບ ແລະ ບໍ່ທັນໃຊ້ມີ ປະມານ ..... Kg/ເດືອນ

☐ ..... ປະລິມານ ..... Kg/ເດ

☐ ..... ປະລິມານ ..... Kg/ເດ

6.2. ສິ່ງເສດເຫຼືອປະເພດພາຊະນະບັນຈຸ

☐ ເຈ້ຍ, ເຈ້ຍແຂງ; ປະມານ ..... Kg/ເດືອນ

☐ ພາຊະນະບັນຈຸທີ່ເປັນປາສະຕິກ; ປະມານ ..... Kg/ເດືອນ

☐ ພາຊະນະບັນຈຸທີ່ເປັນໄມ້; ປະມານ ..... Kg/ເດືອນ

☐ ພາຊະນະບັນຈຸທີ່ເປັນໂລຫະ; ປະມານ ..... Kg/ເດືອນ

☐ ພາຊະນະບັນຈຸທີ່ເປັນແກ້ວ; ປະມານ ..... Kg/ເດືອນ

☐ ພາຊະນະບັນຈຸໃສ່ສານເຄມີ ປະມານ ..... Kg/ເດືອນ

☐ ພະຊະນະບັນຈຸປະເພດກະປ໋ອງສະເປ ປະມານ ..... Kg/ເດືອນ

6.3. ສິ່ງເສດເຫຼືອວັດສະດຸປົນເປື້ອນສານເຄມີ (ເສດຜ້າ, ຖົງມື...ທີ່ປົນເປື້ອນສານເຄມີ)

☐ ວັດສະດຸປົນເປື້ອນສານເຄມີ; ປະມານ ..... Kg/ເດືອນ

6.4. ສິ່ງເສດເຫຼືອອື່ນໆ

☐ ສິ່ງເສດເຫຼືອເຄມີ, ສານເຄມີໝົດອາຍຸ ປະມານ ..... Kg/ປີ

☐ ນ້ຳມັນໄຮໂດຼລິກ, ນ້ຳເຄື່ອງ, ນ້ຳມັນເກຍ; ປະມານ ..... Kg/ປີ

☐ ຕະກອນຈາກລະບົບບຳບັດນ້ຳເປື້ອນ; ປະມານ ..... Kg/ປີ

☐ ສິ່ງເສດເຫຼືອຈາກລະບົບບຳບັດອາກາດ; ປະມານ ..... Kg/ປີ

☐ ອຸປະກອນໄຟຟ້າ ແລະ ເອເລັກໂຕນິກ; ປະມານ ..... Kg/ປີ

☐ ສິ່ງເສດເຫຼືອເຄມີທີ່ໃຊ້ໃນຫ້ອງທົດລອງ; ປະມານ ..... Kg/ປີ

☐ ແບດເຕີລີ; ປະມານ ..... Kg/ປີ

☐ ສິ່ງເສດເຫຼືອຈາກການກໍ່ສ້າງ ແລະ ທັບມ້ຽງ; ປະລິມານ ..... Kg/ປີ

☐ ສິ່ງເສດເຫຼືອຈາກເຄມີກະສິກຳ; ປະມານ ..... Kg/ປີ

☐ ..... ປະມານ ..... Kg/ປີ

☐ ..... ປະມານ ..... Kg/ປີ

IV.ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງສິ່ງເສດເຫຼືອ ຈາກໂຮງງານອຸດສາຫະກຳປຸງແຕ່ງ.

- ການຢັ້ງຢືນລະບົບເຕັກນິກລະບົບບຳບັດອາກາດ ແລະ ລະບົບເຕັກນິກນ້ຳເປື້ອນ
- ການຕິດຕາມກວດກາປະຈຳປີຂອງການປ່ອຍມົນລະພິດທາງອາກາດຂອງໂຮງງານ.
- ການຢັ້ງຢືນການປ່ອຍມົນລະພິດທາງອາກາດ.

V. ສິ່ງທ້າທາຍ ແລະ ຂໍ້ຫຍຸ້ງຍາກ.

- ການເກັບຂໍ້ມູນກ່ຽວກັບມົນລະພິດທາງອາກາດຂອງໂຮງງານອຸດສາຫະກຳປຸງແຕ່ງຍັງບໍ່ທັນຊັດເຈນ, ຄວາມຮູ້ຄວາມສາມາດຂອງບຸກຄະລາກອນ ດ້ານການຕິດຕາມແມ່ນຍັງມີໜ້ອຍ.
- ຂາດງົບປະມານການ ໃນການຈັດຕັ້ງປະຕິບັດກວດກາຕົວຈິງ.
- ເຄື່ອງມືວັດແທກມົນລະພິດທາງອາກາດແມ່ນຍັງບໍ່ທັນພຽງພໍກັບໜ້າວຽກຕົວຈິງ ທີ່ສາມາດວັດຄ່າລະດັບຄວາມຊຸ້ນຂອງເຄມີບາງລາຍການ ຈາກການດຳເນີນກິດຈະການແຕ່ລະປະເພດ.

VI. ແຜນການຕໍ່ໜ້າ

- ສົ່ງເສີມການນຳໃຊ້ສິ່ງເສດເຫຼືອ ເຂົ້າມາເປັນເຊື້ອເພີ້ງ RDF ທີ່ປ້ອນໃຫ້ກັບໂຮງງານຊີມັງຄຳມ່ວນ KCL
- ສົ່ງເສີມການນຳໃຊ້ເຊື້ອງເພີ້ງຊີວະມວນ
- ສົ່ງເສີມການຕິດສະຫຼາກສີຂຽວ (Green Label) ໃສ່ຜະລິດຕະພັນອຸດສາຫະປຸງແຕ່ງ.

ขอบใจ

